ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ ເລກທີ_ 59_____/ນຍ.

ວຽງຈັນ,ວັນທີ .2/ພຶດສະພາ/2002.

# ດຳລັດ

## ວ່າດ້ວຍການຄຸ້ມຄອງປ່າຜະລິດແບບຍືນນານ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປລາວສະບັບເລກທີ 01/ສພຊ, ລົງວັນທີ :08/03/1995 ;
- ອີງຕາມກົດໝາຍປ່າໄມ້ສະບັບເລກທີ :01-96, ລົງວັນທີ 11/10/1996 .
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມສະບັບເລກທີ 02/99/ສພຊດ ລົງວັນທີ 03/ເມສາ/1999
- ອີງຕາມສະເໜີຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ສະບັບເລກທີ 0353/ກປ.ໜກ.2002,ລົງວັນທີ29/04/2002

## ນາຍົກລັດຖະມົນຕີອອກດຳລັດ :

## ພາກທີ I

## ຫຼັກການລວມ

ມາດຕາ1.ເນື້ອໃນລວມ

ດຳລັດສະບັບນີ້ມີເນື້ອໃນກວມເອົາການກຳນົດ , ການສາງຕັ້ງການຄຸ້ມຄອງ,ການນຳໃຊ້ຊັບພະຍາກອນປ່າໄມ ໃນເຂດປ່າຜະລິດ ແລະ ຫຼັກການພື້ນຖານໃນການ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດແບບຍືນນານໃນຂອບເຂດທົ່ວປະເທດກພ້ອມດຽວ ກັນນັ້ນ ດຳລັດສະບັບນີ້ຍັງໄດ້ກຳນົດສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ອຳນາດ ການປົກຄອງທີ່ກ່ຽວ ຂ້ອງພ້ອມດ້ວຍປະຊາຊົນທີ່ໄດ້ເຂົ້າຮ່ວມໃນການຄຸ້ມຄອງປ່າຜະລິດອີກດວ້ຍ.

ມາດຕາ 2.ຈຸດປະສົງ

ດຳລັດສະບັບນີ້ວາງອອກເພື່ອແນໃສ່ :

2.1 ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນກົດໝາຍປ່າໄມ້ ໃນການສະໜອງໄມ້ ແລະຜະລິດຕະພັນໄມ້ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂື້ນ ດ້ວຍລະບົບການຄຸ້ມຄອງ ປ່າຜະລິດແບບຍືນນານ.

2.2 ກຳນົດຫຼັກການ ແລະ ຂັ້ນຕອນເພື່ອສ້າງຕັ້ງ ເຂດປ່າຜະລິດໃນຂອດເຂດທົ່ວປະເທດ ພາຍໃຕ້ລະບົບການຄຸ້ມຄອງ ປ່າໄມ້ແບບ ຍືນນານ

2.3 ກຳນົດລະບົບແລະກົນໄກທີ່ເອື້ອອຳນວຍໃຫ້ການຈັດສັນປ່າຜະລິດແບບຍືນນານບົນພື້ນຖານການເຂົ້າຮ່ວມ ຂອງ ປະຊາຊົນໃນການວາງແຜນການ,ຄຸ້ມຄອງ ແລະ ໄດ້ຮັບຜົນປະໂຫຍດ

ມາດຕາ 3. ນິຍາມຄຳສັບ.

3.1 <u>ປ່າຜະລິດ</u> : ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ຊຶ່ງຖືກຈັດແບ່ງເພື່ອຕອບສະໜອງຄວາມຮຽກຕ້ອງຂອງການພັດທະນາເສດຖະກິດ - ສັງຄົມຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າດ້ານໄມ້

3.2 <u>ເຂດປ່າຜະລິດ</u> : ແມ່ນພື້ນທີ່ປ່າໄມ້ ແລະ ດິນປ່າໄມ້ທີ່ມີຄຸນລັກສະນະຄົບຖ້ວນຕາມນິຍາມປ່າຜະລິດ ທີ່ໄດ້ຖືກກຳນົດສ້າງຕັ້ງຂື້ນໂດຍຖືກຕ້ອງຕາມລະບຽບ ຫຼັກການ , ເປັນພື້ນທີ່ປ່າໄມ້ທີ່ລວມເອົາຫຼາຍປະເພດປ່າຕາມການຈັດແບ່ງໄວ້ໃນມາດຕາ16 ຂອງກົດໝາຍປ່າໄມ້ທີ່ມີເງື່ອນໄຂຈັດສັນພາຍໃຕ້ລະບົບການຄຸ້ມຄອງແບບຍືນນານ ໂດຍມີການເຂົ້າຮ່ວມ ຂອງປະຊາຊົນ.

3.3 <u>ເຂດຈັດສັນປ່າຜະລິດ :</u> ແມ່ນເນື້ອທີ່ປ່າໄມ້ ແລະ ດິນປ່າໄມ້ຢູ່ໃນເຂດປ່າ ຜະລິດທີ່ໄດ້ກຳນົດຂື້ນເພື່ອດຳເນີນການວາງແຜນຄຸ້ມຄອງ , ນຳໃຊ້ , ຟື້ນຟູ ,ປູກ, ແລະ ປົກປັກຮັກສາຕາມແຜນການຈັດສັນທີ່ໄດ້ຮັບຮອງເອົາຢ່າງເປັນທາງການ.

3.4 <u>ໜ່ວຍຄຸ້ມຄອງປ່າຜະລິດ</u> :ແມ່ນການຈັດໜຶ່ງຂອງລັດຊຶ່ງມີໜ້າທີ່ຮັບຜິດຊອບ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດແບບຍືນນານຂອງເມືອງ ແລະ ຂື້ນກັບໜ່ວຍງານປ່າໄມ້ເມືອງ.

3.5 ການຈັດຕັ້ງປ່າໄມ້ບ້ານ :ແມ່ນ ການຈັດຕັ້ງໜຶ່ງຂອງຊາວບ້ານທີ່ໄດ້ຖືກສ້າງຕັ້ງຂື້ນ ຢູ່ພາຍໃນບ້ານເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງປ່າໄມ້ ທີ່ຢູ່ໃນຄວາມຮັບຜິດຊອບຂອງບ້ານໂດຍມີນາຍບ້ານເປັນປະທານ.

# ພາກທີ .II

# ການກຳນົດແລະສ້າງຕັ້ງປ່າຜະລິດ

ມາດຕາ 4. ການກຳນົດເຂດປ່າຜະລິດ

ເນື້ອທີ່ປ່າໄມ້ແລະດິນປ່າໄມ້ໃດໜຶ່ງທີ່ຈະກຳນົດເປັນເຂດປ່າຜະລິດໄດ້ຕ້ອງປະກອບດ້ວຍປັດໃຈສຳຄັນດັ່ງລຸ່ມນີ້ :

4.1 ແມ່ນພື້ນທີ່ປ່າໄມ້ ແລະ ດິນປ່າໄມ້ທີ່ຕັ້ງຢູ່ໃນພູມມີປະເທດອັນເໝາະສົມສຳລັບຈັດແບ່ງເພື່ອຮັບໃຊ້ເຂົ້າໃນປະສົງອື່ນ ແລະ ບໍ່ແມ່ນທີ່ເຂດສະຫງວນໄວ້ເພື່ອຈຸດປະສົງທາງດ້ານຍຸດທະສາດຂອງຊາດ.

4.2 ແມ່ນພື້ນທີ່ປ່າໄມ້ ແລະ ດິນປ່າໄມ້ ທີ່ສາມາດມີເງື່ອນໄຂເໝາະສົມສຳລັບຕອບ ສະໜອງໄມ້ ແລະ ຜະລິດຕະພົນໄມ້ສຳລັບຈຸດປະສົງເພື່ອການຜະລິດໄດ້ທັງໃນປະຈຸບັນກໍຄືໃນອານາຄົດ.

4.3 ມີຂະໜາດເນື້ອທີ່ເໝາະສົມສຳລັບດຳເນີນການ ຈັດສັນແບບຍືນນານ ທີ່ມີຜົນກຳໄລໄດ້ . ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດເງື່ອນໄຂ ແລະ ມາດຖານລະອຽດ ສະເພາະ ເພື່ອຈັດຕັ້ງປະຕິບັດ.

ມາດຕາ 5. ການສ້າງຕັ້ງ ເຂດປ່າຜະລິດ.

5.1 ກະຊວງກະສິກຳ ແລະ ປ່າໄມ້ຕ້ອງເປັນເຈົ້າການ ປະສານສົມທົບກັບ ແຂວງ , ກຳແພງນະຄອນ ແລະ ເຂດພິເສດປະກອບເອກະສານຂໍສ້າງຕັ້ງ ປ່າຜະລິດ ຢ່າງຄົບຖ້ວນເພື່ອ ນຳສະເໜີນາຍົກລັດຖະມົນຕີເປັນຜູ້ເຊັນຮອງຮັບອະນຸມັດ.ພາຍຫຼັງທີ່ໄດ້ຮັບການອະນຸມັດສ້າງຕັ້ງປ່າຜະລິດແລ້ວຕ້ອງໄດ້ດຳເນີນການຈັດແບ່ງເຂດ ສຳລັບການຄຸ້ມຄອງ ແລະ ດຳເນີນການສຳຫຼວດເພື່ອວາງແຜນຈັດສັນ ໂດຍມີການເຂົ້າຮ່ວມຂອງ ໜ່ວຍຄຸ້ມຄອງປ່າຜະລິດ ແລະ ຊາວບ້ານຕາມຂໍ້ແນະນຳທີ່ກະຊວງກະສິກຳແລະປ່າໄມ້ເປັນຜູ້ວາງອອກ.

5.2 ພາຍຫຼັງທີ່ນາຍົກລັດຖະມົນຕີໄດ້ເຊັນຮອງເອົາການສ້າງຕັ້ງປ່າຜະລິດນັ້ນແລ້ວ, ກະຊວງກະສິກຳ ແລະ ປ່າໄມ້ຕ້ອງໄດ້ເກັບຮັກສາເອກະສານກ່ຽວກັບ ຂໍ້ມູນທັງໝົດໄວ້ສຳລັດການທົບຄືນໃນເມື່ອມີການສະເໜີແກ້ໄຂ ຫຼື ດັດແປງໆທຸກໆການປ່ຽນແປງເຂດແດນຂອງເຂດປ່າຜະລິດນັ້ນຕ້ອງໄດ້ຖືກອະນຸມັດຈາກນາຍົກລັດຖະມົນຕີໂດຍຜ່ານການນຳສະເໜີ ຂອງ ກະຊວງກະສິກຳແລະປ່າໄມ້.

## ພາກທີ III
## ການຄຸ້ມຄອງເຂດປ່າຜະລິດ

**ມາດຕາ 6. ການແບ່ງເຂດຄຸ້ມຄອງ.**

ຂະແໜງກະສິກຳ ແລະ ປ່າໄມ້ເປັນເຈົ້າການສົມທົບກັບ ອຳນາດການປົກຄອງທ້ອງຖິ່ນຮັບຜິດຊອບໃນການແບ່ງເຂດຄຸ້ມຄອງປ່າໄມ້ຢູ່ໃນເຂດປ່າຜະລິດໃຫ້ສອດຄ່ອງກັບເຂດການປົກຄອງຂອງທ້ອງຖິ່ນໂດຍອີງໃສ່ ແຜນຈັດສັນລວມ ຂອງເຂດປ່າຜະລິດທີ່ໄດ້ຜ່ານການຮັບຮອງຢ່າງເປັນທາງການທັງນີ້ກໍ່ເພື່ອໃຫ້ສາມາດຄຸ້ມຄອງປ່າໄມ້ ຢ່າງມີປະສິດຕິຜົນ ແລະ ເພື່ອເຮັດໃຫ້ຊາວບ້ານໄດ້ມີລາຍຮັບຈາກການເຂົ້າຮ່ວມໃນການຄຸ້ມຄອງເຂດປ່າຜະລິດ . ກະຊວງກະສິກຳ ແລະ ປ່າໄມ້ເປັນຜູ້ກຳນົດຂັ້ນຕອນລະອຽດໃນການຈັດຕັ້ງປະຕິບັດຈິງ.

**ມາດຕາ 7.ແຜນການຄຸ້ມຄອງປ່າຜະລິດ.**

ແຕ່ລະເຂດປ່າຜະລິດຕ້ອງໄດ້ມີແຜນການຄຸ້ມຄອງສະຕາມຂໍ້ມູນຕົວຈິງໂດຍມີລະບົບການຈັດສັນທຸກງປະເພດປ່າ ແລະ ຕອບສະໜອງທຸກໆ ຈຸດປະສົງຂອງການຄຸ້ມຄອງແບບຍືນນານຢູ່ໃນເຂດປ່າຜະລິດນັ້ນ . ກະຊວງກະສິກຳ ແລະ ປ່າໄມ້ຕ້ອງໄດ້ອອກ ຂໍ້ແນະນຳກ່ຽວກັບການສ້າງ ແລະ ອະນຸມັດແຜນການສຳລັບທຸກລະດັບການຄຸ້ມຄອງປ່າຜະລິດ ໃຫ້ເປັນອັນລະອຽດເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນຂອດເຂດທົ່ວປະເທດ.

**ມາດຕາ 8. ການຈັດຕັ້ງສຳລັດປ່າຜະລິດ.**

ທຸກອົງການຈັດຕັ້ງຄຸ້ມຄອງປ່າໄມ້ທີ່ໄດ້ບັນຍັດໄວ້ໃນມາດຕາ 59 ຂອງກົດໝາຍປ່າໄມ້ ລວັນແຕ່ມີໜ້າທີ່ຮັບຜິດຊອບໂດຍກົງຕໍ່ການຄຸ້ມຄອງປ່າຜະລິດຕາມໜ້າທີ່ພື້ນຖານດັ່ງລຸ່ມນີ້ :

8.1 ກະຊວງກະສິກຳ ແລະ ປ່າໄມ້ເປັນເຈົ້າການ ໃນການປະສານສົມທົບກັບ ຂະແໜງການທີ່ກ່ຽວຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດ ດຳເນີນການກຳນົດ,ສ້າງຕັ້ງ,ຈັດຕັ້ງປະຕິບັດ ແລະ ຕິດຕາມກວດການ ເຂດປ່າຜະລິດໃນຂອບເຂດທົ່ວປະເທດ.

8.2 ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນເສນາທິການໂດຍກົງໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ເຈົ້າແຂວງ,ເຈົ້າຄອງກຳແພງ ແລະ ຫົວໜ້າເຂດພິເສດ ໃນການຜັນຂະຫຍາຍ ມະຕິຄຳສັ່ງ ແລະ ຂໍ້ແນະນຳຕ່າງໆ ກ່ຽວກັບການຄຸ້ມຄອງເຂດປ່າຜະລິດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ໄດ້ຖືກຈັດຕັ້ງປະຕິບັດ . ພ້ອມດຽວກັນນັ້ນກໍ່ມີໜ້າທີ່ໃນການຊີ້ນຳ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມພາລະບົດບາດຂອງຕົນຢ່າງຄົບຖ້ວນ.

8.3 ຫ້ອງການກະສິກຳ ແລະປ່າໄມ້ເມືອງມີໜ້າທີ່ປະຕິບັດວຽກງານຄຸ້ມຄອງປ່າຜະລິດໂດຍມີໜ່ວຍຄຸ້ມຄອງປ່າຜະລິດ . ການຈັດຕັ້ງປ່າໄມ້ບ້ານ ແລະ ພາກສ່ວນກ່ຽວຂອງອື່ນໆ ເປັນຜູ້ຈັດຕັ້ງປະຕິບັດຕົວຈິງຢູ່ໃນເຂດປ່າຜະລິດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມຂໍ້ແນະນຳ ແລະ ລະບຽບການຈັດຕັ້ງປະຕິບັດຕ່າງໆ . ນອກຈາກນັ້ນກໍ່ຍັງມີໜ້າທີ່ໃຫ້ການແນະນຳ ແລະ ຕິດຕາມກວດການວຽກງານຕາມພາລະບົດບາດຂອງຕົນຢ່າງຄົບຖ້ວນ.

8.4 ການຈັດຕັ້ງປ່າໄມ້ບ້ານມີໜ້າທີ່ຈັດຕັ້ງຊາວບ້ານເຂົ້າກັບໜ່ວຍຄຸ້ມຄອງປ່າຜະລິດໃນການຈັດຕັ້ງປະຕິບັດທຸກໆກິດຈະກຳຂອງການຄຸ້ມຄອງປ່າຜະລິດແບບຍືນນານຕາມຄວາມສາມາດຕົວຈິງພາຍໃຕ້ຂໍ້ແນະນຳ ແລະ ບຽບການຕ່າງໆທີ່ວາງອອກກາໃນນັ້ນມີ :ຈັດແບ່ງເຂດຈັດສັນ.ວາງແຜນນຳໃຊ້ທີ່ດິນ . ທຸກຂັ້ນການສຳຫຼວດ, ໝາຍຕົ້ນຕັດເພື່ອຕັດປ່າ໊ ສ້າງແຜນການ.ຕິດຕາມກວດກາ, ຂຸດຄົ້ນໄມ້, ຂາຍໄມ້, ຟື້ນຟູ, ປູກ, ປົກປັກຮັກສາ, ໄດ້ຮັບຜົນປະໂຫຽດ ແລະບັນດາກິດຈະກຳພັດທະນາຕ່າງໆຕາມທີ່ລະບຸໄວ້ໃນສັນຍາແລະແຜນການກ.

ພາລະບົດບາດ ແລະ ໜ້າທີ່ອັນລະອຽດຂອງແຕ່ລະຂັ້ນຄຸ້ມຄອງນັ້ນໃຫ້ ກະຊວງກະສິກຳ ແລະປ່າໄມ້ເປັນຜູ້ກຳນົດໂດຍໃຫ້ສອດຄ່ອງກັບທີ່ໄດ້ບັນຍັດໄວ້ໃນກົດໝາຍປ່າໄມ້.

ມາດຕາ 9. ການຂຸດຄົ້ນໄມ້ແລະຜະລິດຕະພົນປ່າໄມ້ກ.

ການຂຸດຄົ້ນໄມ້ ແລະ ຜະລິດຕະພົນໄມ້ສາມາດນຳເດີນໄດ້ສະເພາະແຕ່ໃນເຂດ ທີ່ໄດ້ສຳເລັດການແບ່ງເຂດຈັດສັນ ຕາມແຜນການ ຄຸ້ມຄອງທີ່ໄດ້ຮັບການອະນຸມັດເອົາຢ່າງເປັນທາງການບົນພື້ນຖານລະບົບການຄຸ້ມຄອງແບບຍືນນານ ໂດຍອີງໃສ່ອັດຕາການທົດແທນຂອງ ປ່າໄມ້ແລະຂໍ້ມູນການສຳຫຼວດກ່ອນການຂຸດຄົ້ນຢູ່ໃນແຕ່ລະເຂດຄຸ້ມຄອງປ່າຜະລິດ.

ມາດຕາ 10.ຂໍ້ຫ້າມຢູ່ພາຍໃນເຂດປ່າຜະລິດ.

ຫ້າມດຳເນີນບັນດາກິດຈະກຳຕ່າງໆທີ່ບໍ່ນອນຢູ່ໃນແຜນດຳເດີນງານປະຈຳປີທີ່ໄດ້ຖືກຮັບຮອງເອົາຢ່າງເປັນທາງການ ແລະ ທີ່ເຫັນວ່າ ຂັດກັບກົດໝາຍປ່າໄມ້ ແລະ ບັນດາລະບຽບການຄຸ້ມຄອງປ່າໄມ້ອື່ນໆ.

## ພາກທີ. iv.
## ຜົນປະໂຫຍດແລະການນຳໃຊ້ຜົນປະໂຫຍດຈາກປ່າຜະລິດ.

### ມາດຕາ 11.ຫຼັກການໃນການຂາຍໄມ້ແລະຜະລິດຕະພົນປ່າໄມ້.

11.1 ການຂາຍໄມ້ ແລະ ຜະລິດຕະພົນປ່າໄມ້ທີ່ໄດ້ຈາກການຂຸດຄົ້ນຢູ່ໃນເຂດປ່າຜະລິດຕ້ອງຂາຍໃຫ້ໂຮງງານປຸງແຕ່ງ ແລະ ດຳເດີນພາຍໃຕ້ການແຂ່ງຂັນລາຄາ ໂດຍອີງໃສ່ຕະລາດເປັນຫຼັກ ແລະຮັບປະກັນໃຫ້ມີຄວາມໂປ່ງໃສດ້ວຍການນຳໄຊ້ວິທີການທີ່ສາມາດໄດ້ລາຄາສູງກ່ວາລາຄາທີ່ລັດຖະບານກຳນົດໄວ້ທັງນີ້ກໍເພື່ອໃຫ້ສາມາດໄດ້ລາຍຮັບສູງມາສູ່ລັດແລະປະຊາຊົນ.

11.2 ການຕັດສິນໃຈໃນການຂາຍໄມ້ ຕ້ອງປະຕິບັດຕາມວິທີທີ່ມີຄວາມໂປ່ງໃສ ແລະ ດຳເດີນໄປດ້ວຍການເຂົ້າຮ່ວມຫຼາຍພາກສ່ວນ ໃນນັ້ນມີທັງການເຂົ້າຮ່ວມຈາກຕົວແທນຂອງການຈັດຕັ້ງປ່າໄມ້ບ້ານໂດຍແມ່ນເຈົ້າແຂວງກເຈົ້າຄອງກຳແພງ ແລະ ຫົວໜ້າເຂດພິເສດເປັນຜູ້ຊີ້ນຳການຈັດຕັ້ງປະຕິບັດແຕ່ລະປີ.

11.3 ກະຊວງກະສິກຳ ແລະປ່າໄມ້ພ້ອມກັບອຳນາດການປົກຄອງທ້ອງຖິ່ນຕ້ອງໄດ້ຊອກຫາວິທີການ ແລະ ກຳນົດມາດຕະການຕ່າງໆ ທີ່ເອື້ອອຳນວຍໃຫ້ແກ່ການສົ່ງເສີມການຜະລິດເປັນສິນຄ້າຢູ່ກັບທີ່ໂດຍນຳໄຊ້ຊິ້ນສ່ວນຂອງຕົ້ນໄມ້ ແລະ ຜະລິດຕະພົນໄມ້ທີ່ບໍ່ສາມາດຂາຍໄດ້.ທັງນີ້ກໍພື່ອເປັນການກະຕຸກຊຸກຍູ້ໃຫ້ຊາວບ້ານມີອາຊີບ ແລະ ລາຍຮັບທີ່ຖາວອນ.

### ມາດຕາ 12. ການຄຸ້ມຄອງລາຍຮັບທີ່ໄດ້ຈາກເຂດປ່າຜະລິດ.

ລາຍຮັບທັງໝົດທີ່ໄດ້ມາຈາກການດຳເດີນວຽກງານຕ່າງໆຢູ່ໃນເຂດປ່າຜະລິດແມ່ນຈະຖືກຄຸ້ມຄອງ ແລະ ນຳໃຊ້ເພື່ອເປົ້າໝາຍລວມເຊັ່ນ :ມອບເຂົ້າງົບປະມານແຫ່ງຊາດ.ເປັນກອງທຶນພັດທະນາປ່າໄມ້. ເປັນລາຍຈ່າຍສຳລັບການດຳເນີນວຽກງານ ແລະ ເປັນກອງທຶນພັດທະນາທ້ອງຖິ່ນ.ອັດຕາສ່ວນແບ່ງສຳຮັບການຄຸ້ມຄອງແລະນຳໃຊ້ແຕ່ລະພາກສ່ວນນັ້ນຕ້ອງໄດ້ຖືກກຳນົດຕາມເງື່ອນໄຂຕົວຈິງໃຫ້ກະຊວງການເງິນເປັນຜູ້ຄົ້ນຄວ້ານຳສະເໜີຕໍ່ ນາຍົກລັດຖະມົນຕີຮັບຮອງເອົາເປັນຫຼັກການພື້ນຖານສຳຮັບການຈັດຕັ້ງປະຕິບັດ.

# ພາກທີ : V

## ການຕິດຕາມກວດກາ ແລະ ມາດຕະການຈັດຕັ້ງປະຕິບັດ.

ມາດ 13. ການຕິດຕາມກວດກາຢູ່ໃນເຂດປ່າຜະລິດ.

13.1 ກະຊວງກະສິກຳ ແລະ ປ່າໄມ້ຕ້ອງໄດ້ອອກຂໍ້ກຳນົດສະເພາະກ່ຽວກັບລະບົບຕິດຕາມ ກວດການແຜນການຈັດສັນລະຍະຍາວ ແລະ ແຜນປະຕິບັດປະຈຳປີ ;ກິດຈະການປ່າໄມ້ ແລະ ສັນຍາຄຸ້ມຄອງປ່າໄມ້ຢູ່ໃນເຂດປ່າຜະລິດ.

13.2 ໃນກໍລະນີທີ່ມີຄວາມຈຳເປັນໃຫ້ອົງການວິທະຍາສາດ,ເຕັກໂນໂລຊີ ແລະ ສິ່ງແວດລ້ອມເປັນອົງການກວດກາອິດສະລະສຳລັບການກວດກາສະພາບປ່າໄມ້ ແລະ ສິ່ງແວດລ້ອມຢູ່ໃນເຂດປ່າຜະລິດໂດຍມີການປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້ດ້ວຍໃຊ້ພາບຖ່າຍດາວທຽມແລະກາສສຳຫຼວດພາກພື້ນດິນ

ມາດຕາ 14. ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕໍ່ຜູ້ລະເມີດຢູ່ໃນເຂດປ່າຜະລິດ.

14.1 ບຸກຄົນແລະການຈັດຕັ້ງ ລວມເອົາທັງໜ່ວຍງານຂອງລັດ ແລະ ເອກກະຊົນທີ່ມີຜົນງານດີເດັ່ນເຂົ້າຮ່ວມຈັດຕັ້ງປະຕິບັດວຽກງານຄຸ້ມຄອງ.ນຳໃຊ້.ປົກປັກສາ ແລະ ຟື້ນຟູບູລະນະປ່າຜະລິດຈະໄດ້ຮັບການຍອງຍໍແລະນະໂຍບາຍຕ່າງໆຕາມຄວາມສົມ.

ຂະແໜງການປ່າໄມ້ ແລະ ອຳນາດການປົກຄອງທ້ອງຖິ່ນ ແຕ່ລະຂັ້ນມີໜ້າທີ່ຮັບຜິດຊອບໃນການໃຊ້ມາດຕະການຕ່າງໆ ຕໍ່ຜູ້ລະເມີດໂດຍໃຫ້ສອດຄ່ອງຕາມທີ່ໄດ້ບັນຍັດໄວ້ໃນກົດໝາຍດັ່ງກ່າວ.ອົງການຈັດຕັ້ງອື່ນໆຕ້ອງໄດ້ໃຫ້ການຮ່ວມມືກັບພະນັກງານປ່າໄມ້ ແລະຊາວບ້ານໃນການສະກັດກັ້ນ.ປະຕິບັດມາດຕະການຕໍ່ຜູ້ລະເມີດຢູ່ໃນເຂດປ່າຜະລິດ

ມາດຕາ15. ການແກ້ໄຂຂໍ້ຂັດແຍ່ງ.

15.1 ໃນກໍລະນີມີຂໍ້ຂັດແຍ້ງໃດໆເກີດຂື້ນລະວ່າງບັນດາພາກສ່ວນທີ່ກ່ຽວຂ້ອງຕ່າງໆໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າຜະລິດ ຕົວຈິງຢູ່ໃນການຄຸ້ມຄອງຂັ້ນໃດຂະແໜງການ ແລ ະອຳນາດການປົກຄອງຂັ້ນນັ້ນຕ້ອງໄດ້ຮ່ວມກັນພິດຈາລະນາແກ້ໄຂຕາມຄວາມເໝາະສົມ, ຍູຕິທຳແລະທັນເວລາ.

15.2 ໃນກໍລະນີທີ່ ບໍ່ສາມາດ ໄກ່ເກັ່ຽໄດ້ດ້ວຍວິທີທາງບໍລິຫານ ຕ້ອງໄດ້ປະຕິບັດຕາມຂັ້ນຕອນຂອງຂະບວນການຍຸດຕິທຳ.

# ພາກທີVI

# ບົດບັນຍັດສຸດທ້າຍ.

ມາດຕາ16. ການຈັດຕັ້ງປະຕິບັດ

16.1 ກະຊວງກະສິກຳແລະປ່າໄມ້,ບັນດາຂະແໜງການ,ອົງການທຽບເທົ່າແລະອຳນາດການປົກຄອງທຸກຂັ້ນມີໜ້າທີ່ອອກຂໍ້ແນະນຳ,ເຜີຍແຜ່,ຝຶກອົບຮົມແລະຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງມີປະສິດທິຜົນ.

16.2 ບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນລວມທັງໜ່ວຍງານຂອງລັດ ແລະ ເອກກະຊົນຈະຕ້ອງໄດ້ເອົາໃຈໃສ່ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນຢ່າງດີ.

ມາດຕາ 17. ຜົນສັກສິດ

17.1 ບັນດາດຳລັດ ແລະ ລະບຽບການຕ່າງໆ ທີ່ປະກາດໃຊ້ໃນເມື່ອກ່ອນ ທີ່ເຫັນວ່າຂັດກັບເນື້ອໃນຂອງດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

17.2 ດຳລັດສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບແຕ່ ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 22 ພຶດສະພາ 2002.

ເຊັນແທນ ນາຍົກລັດຖະມົນຕີ

( ຮອງນາຍົກລັດຖະມົນຕີ )

ອາຊາງ ລາວລີ